**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

ແຂວງອັດຕະປື

ເລກທີ..01......./ ຈຂ.ອປ

ອັດຕະປື,ວັນທີ 06 ກຸມພາ 2018

**ຄຳສັ່ງແນະນຳ**

ເຖິງ : ບັນດາພະແນກການ,ອົງການທຽບເທົ່າ,ອົງການປົກຄອງເມືອງ 5 ຕົວເມືອງ, ອົງການຈັດຕັ້ງພາກລັດ, ເອກກະຊົນ ແລະ ທຸກພາກສ່ວນ ໃນສັງຄົມທົ່ວແຂວງ.

ເລື່ອງ: ເພີ່ມທະວີການຄຸ້ມຄອງ, ກວດກາ ແລະ ສະກັດກັ້ນ ການລັກລອບຊື້ - ຂາຍ ແລະ ເຄື່ອນຍ້າຍໄມ້ຜິດກົດໝາຍ ເຄື່ອງຈັກຕັດໄມ້ ( ຈັກສະຕິນ ), ພະຫານະດັດແປງ, ເຄື່ອງມືລ່າສັດນ້ຳ - ສັດປ່າ ປະເພດຕ່າງໆ ໃນທົ່ວແຂວງ.

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ກົດໝາຍ ວ່າດ້ວຍສັດນ້ຳ ແລະ ສັດປ່າ ສະບັບເລກທີ 07/ສພຊ, ລົງວັນທີ 24 ທັນວາ 2007.
- ອີງຕາມ ກົດໝາຍ ວ່າດ້ວຍການປົກຄອງທ້ອງຖິ່ນແຫ່ງສປປ ລາວ ໝວດທີ IV ມາດຕາ 20 ສະບັບເລກທີ 68/ສພຊ, ລົງວັນທີ 20 ທັນວາ 2015 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ.
- ອີງຕາມ ຄຳສັ່ງເລກທີ 15/ນຍ , ລົງວັນທີ 13/05/2016.
- ອີງຕາມ ຄຳສັ່ງ ແນະນຳຂອງເຈົ້າແຂວງສະບັບເລກທີ 606/ຈຂອປ,ລົງວັນທີ22/6/2016

ເພື່ອເພີ່ມທະວີໃນການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງ, ກວດກາ ແລະ ສະກັດກັ້ນ ການລັກລອບຊື້ -ຂາຍ ແລະ ເຄື່ອນຍ້າຍໄມ້, ພາຫະນະດັດແປງ, ເຄື່ອງຈັກຕັດໄມ້ ແລະ ເຄື່ອງມືລ່າສັດນ້ຳ - ສັດປ່າ ທີ່ຜິດກົດໝາຍ ໃຫ້ມີຄວາມເຂັ້ມງວດ ຕາມກົດໝາຍ ແລະ ລະບຽບການທີ່ວາງອອກທັງເປັນການຕ້ານ ແລະ ສະກັດກັ້ນ, ແກ້ໄຂປະກົດການຫຍໍ້ທໍ້ດ້ານຕ່າງໆ ໃນຂົງເຂດວຽກງານປ່າໄມ້ ໃຫ້ຫຼຸດລົງ ແລະ ໝົດໄປເທື່ອລະກ້າວ.

**ເຈົ້າແຂວງອອກຄຳສັ່ງແນະນຳ:**

1. ໃຫ້ເອົາໃຈໃສ່ ສືບຕໍ່ ວຽກງານໂຄສະນາ, ເຜີຍແຜ່ ກົດໝາຍ, ລະບຽບການ ແລະ ບັນດານິຕິກຳ ທີ່ກ່ຽວພັນ ໃນການຄຸ້ມຄອງ ຊັບພະຍາກອນປ່າໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ - ສັດປ່າ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ນັກທຸລະກິດ ຜູ້ປະ ກອບການ ຕະຫຼອດຮອດພໍ່ແມ່ປະຊາຊົນບັນດາເຜົ່າ ໄດ້ເຊື່ອມຊຶມ ເຂົ້າໃຈ ກ່ຽວກັບຄວາມ ສຳຄັນ ຕໍ່ກັບ

ວຽກງານປ່າໄມ້ຢ່າງກ້ວາງຂວາງ.

2. ເພີ່ມທະວີຄວາມເຂັ້ມງວດ ດ້ວຍຄວາມເປັນເຈົ້າການ ຂອງທຸກພາກສ່ວນ ໃນທົ່ວສັງຄົມ ເປັນຕົ້ນ ຕໍ່ການຈັດຕັ້ງປະຕິບັດວຽກງານ ຂອງພະນັກງານ ແລະ ເຈົ້າໜ້າທີ່, ທີ່ ປະຈຳ ຢູ່ຈຸດ ກວດກາຕ່າງໆ.
3. ເພີ່ມທະວີ ການຄຸ້ມຄອງວຽກງານປ່າໄມ້ ແລະ ທຸລະກິດໄມ້ ດ້ວຍລະບຽບກົດໝາຍ ຢ່າງເຂັ້ມງວດ, ໃຫ້ຢຸດຕິ ການລັກລອບຂຸດຄົ້ນໄມ້, ທ້ອນໂຮມໄມ້, ເຄື່ອນຍ້າຍໄມ້ ແລະ ການຊື້ - ຂາຍໄມ້ ທີ່ຜິດກົດໝາຍ ຢ່າງສິ້ນເຊີງ.
4. ບໍ່ໃຫ້ບຸກຄົນ, ນິຕິບຸກຄົນ ເກັບຊື້ໄມ້, ທ້ອນໂຮມໄມ້ໄວ້ຕາມເຮືອນຊານ ຫຼື ເຄຫາສະຖານຕ່າງໆ ແລະ ນຳເຂົ້າໂຮງງານ ທີ່ບໍ່ໄດ້ຮັບອະນຸຍາດ ຖ້າພົບເຫັນ ແມ່ນ ໃຫ້ເຈົ້າໜ້າທີ່, ທີ່ກ່ຽວຂ້ອງ ປະຕິບັດຕາມ ລະບຽບກົດໝາຍ .
5. ມອບໃຫ້ ພະແນກໂຍທາທິການແຂວງ ສົມທົບ ກັບ ກອງບັນຊາການ ປກສ ແຂວງ ແລະ ເມືອງ ລົງກວດລ້າງ ກ່ຽວກັບ ພາຫະນະ ທີ່ດັດແປງສະພາບ ( ບໍ່ມີບ່ອນນັ່ງ ) ບໍ່ມີປ້າຍທະບຽນ ຫຼື ປ້າຍປອມແປງ ທີ່ນຳໃຊ້ເຂົ້າໃນການຂົນສົ່ງເຄື່ອນຍ້າຍໄມ້ຜິດກົດໝາຍ ໃຫ້ຢຶດ ແລະ ປັບໃໝ ຕາມ ລະບຽບກົດໝາຍ ຢ່າງເຂັ້ມງວດ.
6. ມອບໃຫ້ພະແນກອຸດສະຫະກຳ ແລະ ການຄ້າ ກວດກາການນຳເຂົ້າຈັກສະຕິນ ທີ່ນຳເຂົ້າເພື່ອເປົ້າໝາຍທຳລາຍປ່າໄມ້ໃນກໍລະນີຫາກມີຄວາມຈຳເປັນຈະນຳໃຊ້ ຕ້ອງໄດ້ມີການອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ.
7. ມອບໃຫ້ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ສົມທົບ ກັບ ກອງບັນຊາການ ປກສ ແຂວງ ແລະ ເມືອງ ລົງສົມທົບ ກັບກຸ່ມບ້ານ ຮິບໂຮມ ເຄື່ອງຈັກຕັດໄມ້ ( ຈັກສະຕິນ ) ທີ່ບໍ່ໄດ້ຮັບອະນຸຍາດ ຢູ່ຕາມຮ້ານສ້ອມແປງ, ຮ້ານຂາຍ ຈັກສະຕິນ ແລະ ຢູ່ນຳປະຊາຊົນ ພ້ອມທັງກວດກາ ອາວຸດລ່າເນື້ອ, ເຄື່ອງຊັອດປາ, ທາດເຄມີ ຢາເບື່ອ ມີລັກສະນະດັບສູນ ສັດນ້ຳ ທຸກ ປະເພດ ທີ່ຜິດຕໍ່ ລະບຽບກົດໝາຍ ແມ່ນໃຫ້ຢຶດ ແລະ ຈັດພິທີທຳລາຍຖິ້ມ.
8. ສຳລັບໄມ້ທີ່ຢຶດໄດ້ ຢູ່ ຕາມສຳນັກງານ, ກົມກອງຂອງຕົນ ບໍ່ວ່າຢູ່ຂັ້ນແຂວງ ຫຼື ເມືອງ ໃຫ້ສັງລວມລາຍງານ ໃຫ້ ພະແນກກະສິກຳ ແລະ ປ່າໄມ້ແຂວງ ເພື່ອຂຶ້ນບັນຊີ ສົ່ງໃຫ້ ພະແນກ ການເງິນ ຈົດເຂົ້າທະບຽນຊັບສິນ, ໃຫ້ ພະແນກອຸດສະຫະກຳ ແລະ ການຄ້າ ໄລ່ລຽງ ຄ່າພັນທະໄມ້ ແລ້ວ ສົ່ງໃຫ້ ຄະນະປະມູນ ຊື້ - ຂາຍໄມ້ ຂັ້ນແຂວງ ເປັນຜູ້ຈັດຕັ້ງປະຕິບັດ ຕາມລະບຽບການ.
9. ມອບໃຫ້ພະແນກອຸດສະຫະກຳ ແລະ ການຄ້າ ສົມທົບກັບພາກສ່ວນ ທີ່ກ່ຽວຂັ້ນແຂວງ ແລະ ເມືອງ ຊຸ້ນຊ້ຽວກວດກາການດັດສົມ ບັນດາໂຮງານເຟີນີເຈີ, ໂຮງງານ ປຸງແຕ່ງ ທີ່ບໍ່ໄດ້ມາດຖານໃຫ້ສຳເລັດ,
10. ມອບໃຫ້ພະແນກກະສິກຳ ແລະ ປ່າໄມ້ແຂວງ ແລະ ເມືອງ ເປັນເຈົ້າການ ສະກັດກັ້ນການຖາງປ່າເຮັດໄຮ່ ແບບເລື່ອນລອຍໃນຂອບເຂດ 03 ປະເພດປ່າ ຖ້າພົບເຫັນ ຕ້ອງປະຕິບັດ ຕາມ ລະບຽບ ກົດໝາຍ .
11. ມອບໃຫ້ ເຈົ້າເມືອງ 05 ຕົວເມືອງ ເອົາໃຈໃສ່ຊີ້ນຳ ພາກສ່ວນກ່ຽວຂ້ອງ ອຳນາດການປົກຄອງບ້ານ ພໍ່ແມ່ປະຊາຊົນກວດກາ ຕິດຕາມ ສະກັດກັ້ນໄຟໃໝ້ ລາມປ່າໃນລະດູແລ້ງ ໃນຂອບເຂດແຕ່ລະບ້ານ ເຊິ່ງຈະເກີດຜົນເສຍຫາຍຕໍ່ຊັບສິນຂອງແຂວງ ກໍ່ຄືຂອງພໍ່ແມ່ປະຊາຊົນ, ຖ້າເຫັນວ່າ ເກີດຂຶ້ນຢູ່ບ່ອນໃດ ຕ້ອງໄດ້ລະດົມຊ່ວຍກັນດັບມອດໃຫ້ທັນການ.
12. ໃຫ້ ພະແນກະສິກຳ ແລະ ປ່າໄມ້ ສົມທົບ ກັບກອງບັນຊາການ ປກຊ ແຂວງ,ພາກສ່ວນກ່ຽວຂ້ອງເອົາໃຈໃສ່ຕິດຕາມກວດກາສະກັດກັ້ນ ຕາມຈຸດຫຼໍ່ແຫຼມ ເຂດຊາຍແດນ ຈຸດເຂົ້າ - ອອກ ຂອງກຸ່ມ ຄົນບໍ່ດີເຄື່ອນໄຫວ ລັກລອບຂຸດຄົ້ນ, ເຄື່ອນຍ້າຍໄມ້ ທີ່ ຜິດກົດໝາຍ ຕາມ ຈຸດຕ່າງໆ ແລະ ເຂັ້ມງວດໃນກວດກາຂອງເຈົ້າທີ່ປະຈຳດ່ານສາກົນພູເກືອ. +
13. ໃຫ້ພາກສ່ວນກ່ຽວຂ້ອງຂັ້ນແຂວງ,ອຳນາດການປົກຄອງຂັ້ນເມືອງ,ຄະນະຄຸ້ມຄອງທີ່ກ່ຽວຂ້ອງ ເອົາໃຈໃສ່ຕິດຕາມກວດກາສະກັດກັ້ນການລັກລອບເຄື່ອນຍ້າຍໄມ້, ລ່າ ສັດ - ສັດປ່າ ທີ່ຫວງຫ້າມ ຢູ່ຕາມຈຸດຫຼໍ່ແຫຼມ ເຂດຊາຍແດນ, ເຂດສຳປະທານສຳຫຼວດຂຸດຄົ້ນບໍ່ແຮ່,ເຂດຂຸດຄົ້ນຫີນປະເສີດ,ເຂດກໍ່ສ້າງອ່າງເກັບນ້ຳ ເຂື່ອນໄຟຟ້າ ແລະ ບ່ອນອື່ນໆ ກໍລະນີຫາກພົບເຫັນ ບຸກຄົນ, ນິຕິບຸກຄົນ, ທະຫານ, ຕຳຫຼວດ, ນັກທຸລະກິດ, ຜູ້ປະກອບການ ຕະຫຼອດຮອດ ພໍ່

ແມ່ປະຊາຊົນ ຕ້ອງໄດ້ປະຕິບັດ ຕາມລະບຽບ ກົດໝາຍ ໂດຍບໍ່ມີຂໍ້ຍົກເວັ້ນໃດໆ ທັງສິ້ນ.

14.ພະນັກງານ, ເຈົ້າໜ້າທີ່, ບຸກຄົນ, ນິຕິບຸກຄົນ ທີ່ມີສ່ວນພົວພັນ, ສົມຮູ້ຮ່ວມຄິດ ຝ່າຝືນຕໍ່ຄຳສັ່ງແນະນຳສະບັບນີ້ ຈະຖືກປະຕິບັດວິໄນ ຕາມສະຖານໜັກ ຫຼືເບົາ.

15.ຄຳສັ່ງ ແນະນຳສະບັບນີ້ ມອບໃຫ້ທຸກພາກສ່ວນ ນຳໄປເຜີຍແຜ່ຂະຫຍາຍ ແລະຈັດຕັ້ງປະຕິບັດໃຫ້ມີປະສິດທິຜົນສູງ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຜູ້ປະຈຳການເຈົ້າແຂວງ

ພອນສະໄໝ ມຽງລາວັນ

<u>ບ່ອນສົ່ງ:</u>

| | |
|---|---|
| ຄະນະປະຈຳພັກແຂວງ ລະ | 1 ສະບັບ. |
| ຫ້ອງວ່າການແຂວງ | 1 ສະບັບ. |
| ພະແນກການ, ກົມກອງ ອ້ອມຂ້າງແຂວງ ລະ | 1 ສະບັບ. |
| ອົງການລັດ ທຽບເທົ່າອ້ອມຂ້າງແຂວງ ລະ | 1 ສະບັບ |
| ອົງການປົກຄອງ ເມືອງ 5 ເມືອງໆລະ | 1 ສະບັບ |
| ສຳເນົາເກັບມ້ຽນ | 1 ສະບັບ. |